ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 1773 /ກຂອ

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2022

# ແຈ້ງການ

ເຖິງ: - ທ່ານ ປະທານສະມາຄົມຍານພາຫະນະ.

- ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ.

ເລື່ອງ: ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ ຢູ່ດ່ານພາສີສາກົນບໍ່ເຕັນ ແຂວງຫຼວງນ້ຳທາ.

- ອີງຕາມ ແຈ້ງການຂອງຫ້ອງການ, ກະຊວງການເງິນ ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ເຂົ້າສູ່ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກປະເພດ ຢູ່ທີ່ດ່ານພາສີສາກົນບໍ່ເຕັນ ສະບັບເລກທີ 1167/ຫກ, ລົງວັນທີ 12 ພຶດສະພາ 2022.

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ໂດຍປະຕິບັດຕາມແຈ້ງການ ຂອງຫ້ອງການ ກະຊວງການເງິນ, ເລກທີ 1167/ຫກ, ລົງວັນທີ 12 ພຶດສະພາ 2022, ເລີ່ມແຕ່ວັນທີ 23 ພຶດສະພາ 2022. ກົມການນຳເຂົ້າ ແລະ ສົ່ງອອກ ຈະພິຈາລະນາອອກໃບອະນຸຍາດນຳເຂົ້າສິນຄ້າປະເພດ ພາຫະນະ ທີ່ນຳເຂົ້າຜ່ານດ່ານພາສີສາກົນບໍ່ເຕັນ ແຂວງຫຼວງນ້ຳທາ ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW). ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກ ພາຫະນະ ໃດທີ່ຍັງບໍ່ທັນລົງທະບຽນນຳໃຊ້ລະບົບ LNSW ແມ່ນໃຫ້ຮີບຮ້ອນລົງທະບຽນນຳໃຊ້ ໂດຍສາມາດພົວພັນກັບ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ ເບີໂທລະສັບ 020 59829365 ແລະ 020 28145652 ເພື່ອລົງທະບຽນ ແລະ ຝຶກອົບຮົມ ວິທີການນຳໃຊ້ຜ່ານລະບົບດັ່ງກ່າວ. ສຳລັບ,ແບບຟອມສະເໜີນຳໃຊ້ລະບົບ ສາມາດດາວໂຫຼດໄດ້ໃນ WWW.laonsw.net ຫຼື ເວັບໄຊ WWW.laotradeportal.gov.la. ສ່ວນການນຳເຂົ້າພາຫະນະຜ່ານດ່ານພາສີສາກົນອື່ນ ແມ່ນສາມາດສືບຕໍ່ນຳລະບົບເຈ້ຍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການນຳເຂົ້າແລະສົ່ງອອກ

ນ. ມະນີວອນ ວົງໄຊ